# Media Release

Cambodia • Lao PDR • Thailand • Viet Nam
For sustainable development

**ສາມາດອອກຂ່າວໄດ້ທັນທີ**

# ບົດລາຍງານສະບັບໃໝ່ ຮຽກຮ້ອງໃຫ້ດຳເນີນການ ເພື່ອປົກປ້ອງ ເສັ້ນທາງນ້ຳຕົ້ນຕໍ ຂອງອາຊີຕາເວັນອອກສ່ຽງໃຕ້

**ທີ່ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 15 ມີນາ 2022** — ເນື່ອງຈາກວ່າ ໃນປະຈຸບັນນີ້ ແມ່ນ້ຳຂອງທີ່ສຳຄັນແຫ່ງນີ້ ກຳລັງໄດ້ຮັບຜົນກະທົບຈາກ ບັນດາໂຄງການກໍ່ສ້າງໂຄງລ່າງພື້ນຖານ ແລະ ການປ່ຽນແປງດິນຟ້າອາກາດ, ສະນັ້ນ ບົດລາຍງານສະບັບໃໝ່ ຈຶ່ງໄດ້ຮຽກຮ້ອງໃຫ້ມີການຮ່ວມມືກ່ຽວກັບນ້ຳ ຢ່າງຮີບດ່ວນ ເພື່ອປົກປ້ອງ ແມ່ນ້ຳທີ່ໃຫຍ່ທີ່ສຸດ ໃນອາຊີຕາເວັນອອກສ່ຽງໃຕ້ ແລະ ເພື່ອສົ່ງເສີມການພັດທະນາຢ່າງຍືນຍົງ ສຳລັບປະຊາຊົນຫຼາຍລ້ານຄົນ ໃນພາກພື້ນແຫ່ງນີ້.

ໃນວັນນີ້ ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ເຊິ່ງປະກອບດ້ວຍ ປະເທດກຳປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ ໄດ້ເຜີຍແຜ່ ບົດລາຍງານຜົນສຳເລັດຂອງຕົນ (Achievement Report) ສຳລັບ ແຜນຍຸດທະສາດຂອງ ຄມສ ປີ 2016–2020. ບົດລາຍງານສະບັບນີ້ ສະແດງອອກໃຫ້ເຫັນເຖິງ ການຮ່ວມມືແມ່ນ້ຳຂອງ ໃນລະດັບທີ່ສູງເປັນປະຫວັດການ ຍ້ອນວ່າ ມັນເນັ້ນໜັກໃຫ້ເຫັນເຖິງ ຜົນສຳເລັດຂະໜາດໃຫຍ່, ການປະຕິບັດງານ ທີ່ໄດ້ດຳເນີນມາ ແລະ ຕົວຊີ້ວັດສຳຄັນ ທີ່ໄດ້ສ້າງຄວາມຮັບຮູ້ ທົ່ວທັງພາກພື້ນ ກ່ຽວກັບວ່າ ການພັດທະນາ ແລະ ໄພນ້ຳຖ້ວມແລະໄພແຫ້ງແລ້ງ ທີ່ຮຸນແຮງເພີ້ມຂຶ້ນເລື້ອຍໆ ທັງໝົດນັ້ນ ກະທົບກັບ ອ່າງແມ່ນ້ຳຂອງຕອນລຸ່ມ ຄືແນວໃດ ທັງໃນທາງດ້ານບວກ ແລະ ທາງດ້ານລົບ.

ວຽກງານເລົ່ານີ້ ໄດ້ປຸກລະດົມ ບັນດາປະເທດສະມາຊິກ ໃຫ້ດຳເນີນບາດກ້າວຕ່າງໆ ຢ່າງມີການປະສານງານກັນແບບທີ່ບໍ່ເຄີຍມີມາກ່ອນ ເຊິ່ງຮວມທັງ ການດຳເນີນວຽກງານກັບ 2 ປະເທດເພື່ອນບ້ານ ຢູ່ເຂດເທິງແມ່ນ້ຳ ກໍ່ຄືປະເທດຈີນ ແລະ ປະເທດມຽນມາ. ບົດລາຍງານ 174 ໜ້າ ສະບັບນີ້ ຍັງມີເປົ້າໝາຍເພື່ອ ຈັດພິມເຜີຍແຜ່ ບັນດາບົດຮຽນທີ່ຖອດຖອນໄດ້. ໃນຈຳນວນບົດຮຽນທີ່ຖອດຖອນໄດ້ນັ້ນ ເຊິ່ງໃນປະຈຸບັນນີ້ ແມ່ນນຳໃຊ້ກັບ ແຜນຍຸດທະສາດຂອງ ຄມສ ປີ 2021–2025 ແລະ ຍຸດທະສາດພັດທະນາອ່າງນ້ຳ ປີ 2021–2030, ບົດລາຍງານສະບັບນີ້ ໄດ້ແນະນຳວ່າ ຂໍ້ມູນທີ່ຖ່ວງທັນເວລາ ແລະ ຄວາມຮູ້ລະອຽດທາງວິທະຍາສາດ ຈະສາມາດຊີ້ນຳ ບັນດາຜູ້ວາງແຜນ ແລະ ບັນດາຜູ້ສ້າງນະໂຍບາຍ ໃນການຕັດສິນໃຈ ແລະ ການປະຕິບັດງານຂອງພວກເຂົາ.

ເຖິງຢ່າງໃດກໍ່ຕາມ, ຍັງມີຫຼາຍຢ່າງທີ່ຕ້ອງເຮັດ ໃນປະຈຸບັນນີ້ ເພື່ອຈັດຕັ້ງປະຕິບັດ ມາດຕະການຕ່າງໆ ແລະ ເພື່ອຄຸ້ມຄອງ ແຫຼ່ງຊັບພະຍາກອນນ້ຳ, ກ່າວໂດຍຮອງນາຍົກລັດຖະມົນຕີໄທ ທ່ານ ປຣາວິດ ວົງສຸວັນ ເຊິ່ງເປັນຜູ້ທີ່ ໄດ້ເຮັດໜ້າທີ່ເປັນ ປະທານສະພາບໍລິຫານ ຄມສ ໃນປີ 2021.

"ໃນອ່າງແມ່ນ້ຳຂອງຕອນລຸ່ມນັ້ນ ຜົນກະທົບຈາກ ການປ່ຽນແປງດິນຟ້າອາກາດ ແມ່ນມີຜົນສະທ້ອນເລິກເຊິ່ງ ຕໍ່ກັບ ສະພາບການເປັນຢູ່ທາງສັງຄົມ ແລະ ເສດຖະກິດ ຂອງປະຊາຊົນພວກເຮົາ ເຊິ່ງນັ້ນເປັນບັນຫາທ້າທາຍຕໍ່ເນື່ອງອັນໜຶ່ງ ສຳລັບ ຜູ້ສ້າງນະໂຍບາຍ," ກ່າວໂດຍ ທ່ານ ວົງສຸວັນ ຜູ້ທີ່ເປັນປະທານ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດ ປະເທດໄທ. "ການຮ່ວມມືກ່ຽວກັບນ້ຳ ແມ່ນມີຄວາມສຳຄັນເພີ້ມຂຶ້ນເລື້ອຍໆ ໃນພາກພື້ນຂອງພວກເຮົາ ໂດຍສະເພາະແມ່ນ ໃນທາງດ້ານ ຈຳນວນ ໂຄງການກໍ່ສ້າງເຂື່ອນໄຟຟ້າພະລັງງານນ້ຳ ແລະ ໂຄງການກໍ່ສ້າງໂຄງລ່າງພື້ນຖານທາງນ້ຳ ທີ່ມີຈຳນວນເພີ້ມຂຶ້ນ ແລະ ໃນທາງດ້ານ ກິດຈະການພັດທະນາ."

ສະນັ້ນ ຄມສ ຈຶ່ງໄດ້ທົບທວນ ກອບຕົວຊີ້ວັດຂອງຕົນ (Indicator Framework) ສຳລັບ 5 ປັດໄຈ ໃນການຄຸ້ມຄອງອ່າງແມ່ນ້ຳຂອງ ຄື: ດ້ານສິ່ງແວດລ້ອມ, ດ້ານສັງຄົມ, ດ້ານເສດຖະກິດ, ດ້ານການປ່ຽນແປງດິນຟ້າອາກາດ ແລະ ດ້ານການຮ່ວມມື. ຕົວຊີ້ວັດທັງໝົດເລົ່ານັ້ນ ຈະເຮັດໃຫ້ເຫັນເຖິງພາບທີ່ສົມບູນກວ່າເກົ່າ ກ່ຽວກັບສະຖານະພາບ ແລະ ທ່າອ່ຽງຂອງ ຜົນກະທົບຈາກການພັດທະນາ ແລະ ຍັງໃຫ້ເຫັນເຖິງ ໂອກາດຕ່າງ ໆ.

ບົດລາຍງານສະບັບນີ້ ສະແດງໃຫ້ເຫັນເຖິງ ຕົວຢ່າງເຈາະຈົງຂອງ ສູນຄຸ້ມຄອງໄພນ້ຳຖ້ວມແລະ ໄພແຫ້ງແລ້ງພາກພື້ນ ເຊິ່ງໄດ້ຂະຫຍາຍວຽກງານ ໃຫ້ໄປກວມເອົາ ການພະຍາກອນໄພແຫ້ງແລ້ງ ໃນປີ 2017. ນັບແຕ່ນັ້ນມາ, ຄວາມສາມາດໃນການພະຍາກອນນີ້ ກໍ່ໄດ້ຊ່ວຍຊີວິດ ແລະ ປົກປ້ອງຊັບສິນຂອງປະຊາຊົນ ທີ່ອາໃສຢູ່ໃນອ່າງແມ່ນ້ຳແຫ່ງນີ້. ສິ່ງທີ່ພົ້ນເດັ່ນພິເສດ ກໍ່ຄືວ່າ ການພະຍາກອນແບບປັບປຸງໃໝ່ນີ້ ແມ່ນຜະລິດຕະພັນຂອງ ການລົງເລິກສາຍພົວພັນລະດັບພາກພື້ນ ໂດຍສະເພາະແມ່ນ ສາຍພົວພັນກັບ ນະຄອນຫຼວງປັກກິ່ງ. ມັນເປັນຄັ້ງທຳອິດທີ່ປະເທດຈີນ ໄດ້ຕົກລົງເຫັນດີ ແລກປ່ຽນຂໍ້ມູນອຸທົກກະສາດລະດູແລ້ງຂອງຕົນ.

ດຣ. ອັນ ພິສ ຮັດດາ, ອະດີດຫົວໜ້າກອງເລຂາ ຄມສ ໄດ້ໃຫ້ຮູ້ເຖິງ ສາຍພົວພັນອື່ນ ໆ ທີ່ພົ້ນເດັ່ນ ໃນບົດນຳ ຂອງບົດລາຍງານສະບັບນີ້: “ພວກເຮົາໄດ້ຮັດແໜ້ນ ສາຍພົວພັນກັບ ສູນຮ່ວມມືແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງກ່ຽວກັບຊັບພະຍາກອນນ້ຳ ແລະ ໄດ້ປັບປຸງສາຍພົວພັນຂອງພວກເຮົາ ກັບສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້.” ການຮ່ວມມືດັ່ງກ່າວນັ້ນ ໄດ້ເຮັດໃຫ້ເກີດຜົນປະໂຫຍດແລ້ວ. ປີກາຍນີ້ ຄມສ ແລະ ອາຊຽນ ໄດ້ເປີດກອງປະຊຸມຄັ້ງປະຖົມມະເລີກ ກ່ຽວກັບ ຄວາມໝັ້ນຄົງຂອງນ້ຳ (Water Security Dialogue) ເພື່ອສະແຫວງຫາ ທາງອອກນະວັດຕະກຳໃໝ່ ໆ ເພື່ອແກ້ໄຂບັນຫາທ້າທາຍທີ່ເກີດຂຶ້ນໃໝ່ ຕໍ່ກັບ ຄວາມໝັ້ນຄົງຂອງນ້ຳ.

ໃນຄວາມເປັນຈິງແລ້ວ ໃນປະຈຸບັນນີ້ ບັນດາປະເທດລຽບຝັ່ງແມ່ນ້ຳຂອງ ກຳລັງຂັບເຄື່ອນ ຄວາມພະຍາຍາມຂອງ ຄມສ ຢ່າງເຕັມສ່ວນ. ກ່ອນປີ 2016, ຫົວໜ້າກອງເລຂາ ທີ່ເປັນຄົນຕ່າງປະເທດນັ້ນ ເປັນຜູ້ຊີ້ນຳ ໂດຍມີພະນັກງານຕ່າງປະເທດ ຈຳນວນຫຼາຍ ໃນກອງເລຂາ; ໃນປີ 2016 ຄມສ ໄດ້ແຕ່ງຕັ້ງ ຫົວໜ້າກອງເລຂາຄົນທຳອິດ ຈາກປະເທດສະມາຊິກ ກໍ່ຄື ດຣ. ພາມ ຕວນ ພານ (Pham Tuan Phan). ນອກຈາກນັ້ນແລ້ວ, ການປະຕິຮູບການຈັດຕັ້ງອົງການ ທີ່ປະສົບຜົນສຳເລັດ ໃນວັນນີ້ ກໍ່ຄືວ່າ ທີມງານທັງໝົດ ໂດຍການນຳພາຂອງ ຫົວໜ້າກອງເລຂາຜູ້ປະຈຸບັນ ກໍ່ຄື ດຣ. ອານຸລັກ ກິດຕິຄຸນ ນັ້ນ ແມ່ນປະກອບດ້ວຍ ບັນດາພະນັກງານວິຊາຊີບ ຈາກ 4 ຊາດ. ໃນກອງປະຊຸມສູງສຸດ ຄັ້ງທີ 3 ຂອງ ຄມສ ໃນປີ 2018, ບໍ່ສະເພາະແຕ່ ບັນດານາຍົກລັດຖະມົນຕີ 4 ຊາດ ເທົ່ານັ້ນ ທີ່ໄດ້ຢັ້ງຢືນຄືນກ່ຽວກັບ ພາລະບົດບາດ ແລະ ພາລະກິດຂອງ ຄມສ ແຕ່ວ່າ ປະເທດຈີນ ແລະ ປະເທດມຽນມາ ກໍ່ຍັງໄດ້ໃຫ້ຄຳໝັ້ນກ່ຽວກັບ ການຮ່ວມມືຂອງພວກເຂົາ.

ນອກຈາກນັ້ນແລ້ວ, ຈຸດພົ້ນເດັ່ນໜຶ່ງຂອງ ແຜນຍຸດທະສາດ 2021–2025 ກໍ່ຄື ກຸ່ມຜູ້ຊ່ຽວຊານຮ່ວມອ່າງນ້ຳ ເຊິ່ງຕາງໜ້າໃຫ້ ບັນດາປະເທດແມ່ນ້ຳຂອງ ທັງໝົດ 6 ປະເທດ. ກຸ່ມເລົ່ານີ້ ປະກອບສ່ວນສະໜັບສະໜູນ ທາງດ້ານວິຊາການ ໃຫ້ການວາງແຜນໃນທ່າບຸກ, ການຕິດຕາມແບບເຊື່ອມສານ, ລະບົບຂໍ້ມູນຂ່າວສານ ແລະ ການປະສານງານ ສຳລັບການດຳເນີນການ ໃນອ່າງແມ່ນ້ຳແຫ່ງນີ້. ໂດຍສານຕໍ່ຈາກ ການມີສ່ວນຮ່ວມ ແລະ ການສື່ສານກັບພາກສ່ວນກ່ຽວຂ້ອງ ເປັນປະຈຳ ແລະ ເປັນລະບົບ ໃນໄລຍະ 5 ປີຜ່ານມານັ້ນ, ຄມສ ຈະສືບຕໍ່ສົ່ງເສີມ ຂະບວນການປຶກສາຫາລືລ່ວງໜ້າ ຢ່າງເປີດກວ້າງ ແລະ ທົ່ວເຖິງ ເຊິ່ງຈະຊ່ວຍໃຫ້ ສາທາລະນະ ສາມາດເຂົ້າຮ່ວມໄດ້ຢ່າງຫ້າວຫັນ. ການພົວພັນເຊັ່ນນີ້ ໄດ້ນຳໄປສູ່ ການປຶກສາຫາລື ທີ່ປະສົບຜົນສຳເລັດ ກ່ຽວກັບ ໂຮງຜະລິດໄຟຟ້າພະລັງງານນ້ຳ 3 ແຫ່ງໃໝ່.

**ຂໍ້ມູນສຳລັບບັນນາທິການຂ່າວ:**

ຄມສ ແມ່ນອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືລະດັບພາກພື້ນ ໃນອ່າງແມ່ນ້ຳຂອງຕອນລຸ່ມ. ສ້າງຕັ້ງຂຶ້ນໃນປີ 1995 ຕາມສັນຍາແມ່ນ້ຳຂອງ ລະຫວ່າງ ປະເທດກຳປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ. ອົງການດັ່ງກ່າວນີ້ ເຮັດໜ້າທີ່ເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນສູນກາງຄວາມຮູ້ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນ້ຳ ເພື່ອການພັດທະນາຢ່າງຍືນຍົງ ໃນພາກພື້ນນີ້.

**ຖ້າຕ້ອງການຂໍ້ມູນເພີ່ມຕື່ມ, ກະລຸນາຕິດຕໍ່:**

ທ່ານ ໂສພຽກ ແມ, ພະນັກງານປະຊາສຳພັນ
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ມືຖື: +856-20-77779168